**ມິຊຊາອາທິດທີ 5 ກຳມົດທຳມະດາ**

**ວັນທີ 7 ກຸມພາ 2021**



**ພຣະວໍຣະສານໂດຍນັກບຸນມັກໂກ 1, 29-39**

ເມື່ອອອກຈາກໂຮງທຳເມືອງກາຟານາອຸມແລ້ວ, ພຣະເຢຊູເຈົ້າສະເດັດໄປເຮືອນຂອງຊີມອນແລະອັນເດຣພ້ອມທັງຢາໂກເບແລະຢວງ. ເວລານັ້ນ, ແມ່ເຖົ້າຂອງຊີມອນນອນເປັນໄຂ້ຢູ່. ເຂົາເລີຍທູນໃຫ້ພຣະອົງຊາບພຣະອົງຈຶ່ງເຂົ້າໄປຫາຜູ້ປ່ວຍ, ຈັບມືແລະສັ່ງໃຫ້ລຸກຂຶ້ນ. ທັນທີລາວກໍດີໄຂ້ແລະຈັດການຕ້ອນຮັບພຣະອົງ.

ເມື່ອເຖິງຄ່ຳເວລາຕາເວັນຕົກແລ້ວ, ມີຄົນພາພວກເຈັບໄຊແລະຖືກຜີສິງມາຫາພຣະອົງ. ຄົນໝົດເມືອງພາກັນມາໂຮມໜາແໜ້ນຢູ່ໜ້າປະຕູ. ພຣະອົງໄດ້ຊົງປິ່ນປົວໃຫ້ຫລາຍຄົນຫາຍດີຈາກພະຍາດຕ່າງໆ. ພຣະອົງໄດ້ໄລ່ຜີອອກຢ່າງຫລວງຫລາຍດ້ວຍ, ແຕ່ພຣະອົງບໍ່ໄດ້ອະນຸຍາດໃຫ້ພວກມັນປາກເວົ້າ. ຍ້ອນພວກມັນຮູ້ວ່າພຣະອົງແມ່ນຜູ້ໃດແລ້ວ.

ຮອດມື້ເຊົ້າພຣະອົງກໍຊົງລຸກຂຶ້ນກ່ອນແຈ້ງ, ສະເດັດອອກໄປບ່ອນສອກຫລີກແລະຊົງພາວະນາຢູ່ທີ່ນັ້ນ. ຊີມອນແລະພວກໝູ່ພາກັນໄປຊອກຫາພຣະອົງ.ພົບເຫັນພຣະອົງແລ້ວຈຶ່ງທູນວ່າ: “ໃຜໆກໍຊອກຫາພຣະອົງ.” ພຣະເຢຊູເຈົ້າກ່າວຕອບວ່າ: “ຈົ່ງພາກັນໄປບ່ອນອື່ນ, ໄປຕາມບ້ານເມືອງໃກ້ຖ້ຽງນີ້ເພື່ອເຮົາຈະໄດ້ເທດສອນ, ຍ້ອນເຮົາມາເພື່ອວຽກການນີ້.” ແລ້ວກໍສະເດັດໄປເທດສອນຕາມໂຮງທຳຕ່າງໆທົ່ວແຂວງກາລີເລແລະໄລ່ຜີປີສາດດ້ວຍ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: 1, 29-39**

ວາຈາພຣະເຈົ້າໃນວັນອາທິດນີ້ຊ່ວຍພວກເຮົາໃຫ້ພົບກັບຄວາມໝາຍແລະຄຸນຄ່າໃນຊີວິດຂອງພວກເຮົາ. ຄວາມໝາຍແລະຄຸນຄ່ານີ້ແມ່ນຫຍັງ? ພວກເຮົາຈະພ້ອມກັນຊອກຫາຄຳຕອບໃນບົດອ່ານແລະພຣະວໍລະສານວັນນີ້.

ບົດອ່ານທີໜຶ່ງວັນນີ້ກ່າວເຖິງຊີວິດຂອງທ່ານຢັອບຜູ້ຊຶ່ງເປັນຄົນຊອບທຳ, ຊື່ກົງແລະຢ້ານຈຽມພຣະເຈົ້າ. ທ່ານມີຄອບຄົວທີ່ອົບອຸ່ນແລະຮັ່ງມີ. ແຕ່ແລ້ວວັນໜຶ່ງສິ່ງເຫລົ່ານັ້ນກໍສູນເສຍໄປ. ທ່ານຕ້ອງປະເຊີນໜ້າກັບຄວາມໂດດດ່ຽວໃນຊີວິດຊ້ຳພັດຍັງມີພະຍາດຝ່າຍຜິວໜັງທີ່ກັດກິນທ່ານທັງວັນແລະຄືນ. ຄວາມເຈັບປວດຂອງທ່ານບໍ່ພຽງແຕ່ດ້ານຈິດໃຈເທົ່ານັ້ນ, ແຕ່ຍັງແມ່ນດ້ານຮ່າງກາຍອີກດ້ວຍ. ຕໍ່ໜ້າເຫດການນີ້ທ່ານຢັອບຈຶ່ງຕັ້ງຄຳຖາມຂຶ້ນມາວ່າເປັນຫຍັງທ່ານຈຶ່ງຕ້ອງເກີດມາ? ຖ້າເກີດມາຫາກຕ້ອງພົບກັບຄວາມທຸກທໍລະມານແບບນີ້, ບໍ່ເກີດມາຈະດີກວ່າ. ຊີວິດຈະມີຄວາມໝາຍຫຍັງຫາກຕ້ອງນັ່ງເພື່ອລໍຖ້າຄວາມຕາຍແບບນີ້? ຄວາມສິ້ນຫວັງໃນຊີວິດຂອງທ່ານຢັອບທຳໃຫ້ທ່ານມີຄວາມສົງໄສຕໍ່ຄວາມຮັກແລະຄວາມຍຸດຕິທຳຂອງພຣະເຈົ້າທີ່ມີຕໍ່ທ່ານ.

ສ່ວນໃນບົດອ່ານທີສອງ, ນັກບຸນເປົາໂລກ່າວກັບຊາວໂກຣິນໂທວ່າ ຊີວິດຂອງທ່ານຈະມີຄວາມໝາຍແລະຄຸນຄ່າກໍຕໍ່ເມື່ອທ່ານມີພຣະເຈົ້າແລະຮັບໃຊ້ພຣະອົງ. ການຮັບໃຊ້ພຣະເຈົ້າຄືການທຳໃຫ້ທຸກຄົນຮູ້ຈັກພຣະອົງຜ່ານທາງພຣະວໍລະສານ. ເພາະມີແຕ່ພຣະເຈົ້າເທົ່ານັ້ນຈຶ່ງສາມາດຊ່ວຍພວກເຮົາໃຫ້ຮອດຊີວິດໄດ້. ດ້ວຍເຫດນີ້ທ່ານຈຶ່ງກ່າວວ່າ: “ເວນກຳແກ່ຂ້າພະເຈົ້າ ຖ້າຂ້າພະເຈົ້າບໍ່ປ່າວປະກາດພຣະວໍຣະສານ”. ແລະບໍ່ມີສິ່ງໃດຈະສາມາດແຍກທ່ານອອກຈາກພຣະເຈົ້າແລະຄວາມຮັກຂອງພຣະອົງໄດ້.

ໃນພຣະວໍລະສານວັນນີ້, ພວກເຮົາກໍເຫັນວ່າພຣະເຢຊູເຈົ້າບໍ່ຢຸດຢ່ອນທີ່ຈະຊ່ວຍມະນຸດໃຫ້ພົບກັບຄວາມໝາຍແລະຄຸນຄ່າຂອງຊີວິດດ້ວຍການປິ່ນປົວພວກເຂົາໃຫ້ຫາຍດີຈາກພະຍາດ ແລະປະກາດຂ່າວດີແຫ່ງອານາຈັກສະຫວັນໃຫ້ພວກເຂົາຮູ້ຈັກ.

ສິ່ງທີ່ກ່າວມາຂ້າງເທິງນີ້ສະທ້ອນໃຫ້ພວກເຮົາເຫັນວ່າຊີວິດຂອງພວກເຮົາຈະມີຄວາມໝາຍແລະຄຸນຄ່າໄດ້ກໍຕໍ່ເມື່ອພວກເຮົາຮູ້ຈັກພຣະເຈົ້າ, ສຳພັດໄດ້ເຖິງຄວາມຮັກຂອງພຣະອົງແລະນຳຄວາມຮັກຂອງພຣະອົງນັ້ນໄປໃຫ້ຄົນອື່ນຮູ້ຈັກ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ຮູ້ວ່າພຣະອົງຊົງຮັກແພງລູກແລະຢູ່ນຳລູກສະເໝີ ບໍ່ວ່າລູກຈະຢູ່ໃນສະພາບຊີວິດໃດກໍຕາມ ພຣະອົງກໍຊົງຢູ່ຄຽງຂ້າງລູກສະເໝີ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ